# ນິທານໄກ່ໄຂ່ອອກເປັນຄຳ

ແຕ່ປາງກ່ອນ ຍັງມີສອງຜົວເມັຽ ແລະ ລູກສາວນ້ອຍຄົນນຶ່ງ ປຸກເຮືອນຢູ່ແຄມບ້ານ ໂດຍອາສັຍການເຮັດໄຮ່ເຮັດສວນ ແລະ ລ້ຽງສັດ ເພື່ອລ້ຽງອາຊີບ. ຊີວິດການເປັນຢູ່ຂອງເຂົາເຈົ້າ ກໍຍັງຕົກທຸກໄດ້ຍາກຢູ່ .

ມີຄືນນຶ່ງ ຜົວຈາກມາແຕ່ໄປກ່ຽວຫຍ້າຄາ ຜູ່ເປັນຜົວອິດເໝື່ອຍຫຼາຍຈຶ່ງເຂົ້າໄປນອນແຕ່ຫົວຄໍ່າ. ເງວນອນຫຼັບແລ້ວກໍຝັນເຫັນຫຼາຍສິ່ງຫຼາຍຢ່າງທີ່ແປກປລາດ. ເມື່ອລຸກຈາກນອນ ລາວກໍຟ້າວເຫຼົ່າຄວາມຝັນຂອງຕົນສູ່ເມັຽຟັງວ່າ : ແມ່ອີນາງເອີຍ ! ມື້ຄືນນີ້ຈັ່ງແມ່ນຝັນດີປລາດຕ່າງໆ, ຝັນວ່າມີດາວດວງນຶ່ງສະເດັດລົງໃສ່ຫຼັງຄາເຮືອນຂອງເຮົານີ້ແຫຼະ, ມັນຕົກລົງມາ ແລ້ວກໍມີແສງເຫຼື້ອມແວວາວຄືແກ້ວມະນີ, ບາດຈັບເອົາຜັດຈັບບໍ່ໄດ້ ຄືກັບວ່າມັນຈະໜີໄປອີກ. ເຈົ້າຈຶ່ງຕິດຕາມເບິ່ງເນື້ອວ່າ ແມ່ນເຫດອັນໃດຈະເກີດຂຶ້ນກັບພວກເຮົາ. ເວົ້າແລ້ວ ຜູ່ເປັນຜົວກໍພາຍຂ້ອງ ຖືຊຸ່ມໄປຫາປາຢູ່ໜອງ,ຜູ່ເປັນເມັຽກໍເລົ່າລາງຝັນປລາດຂອງຜົວສູ່ລູກສາວຟັງຕໍ່.

ຕອນກາງເວັນ ໃນຂະນະທີ່ສອງແມ່ລູກ ພວມຂມຸກຂມູ້ຍຢູ່ກັບການແຕ່ງກິນຢູ່ນັ້ນ ກໍຍິນສຽງໄກ່ແມ່ໂຕນຶ່ງກະຕາກຂຶ້ນ, ແມ່ຈຶ່ງບອກລູກສາວວ່າ : ອີ່ນາງເຮີຍ ! ລູກລົງໄປເບິ່ງຄອກໄກ່ຂອງເຮົາດູ, ບໍ່ແມ່ນມີສັດຮ້າຍເຂົ້າມາບໍ່ໄກ່ແມ່ເຮົາຈຶ່ງກະຕາກສຽງດັງ ແລະ ດົນກວ່າຊູ່ມື້ແທ້. ລູກສາວໄດ້ຍິນກໍຟ້າວລົງໄປຫາຄອກໄກ່. ບໍ່ພໍຄາວລາວກໍຮ້ອງມາຫາແມ່ວ່າ : ແມ່ ! ແມ່ເຮີ້ຍ ! ໄກເຮົາໄຂ່ອອກໄຂ່ໜ່ວຍນຶ່ງ ແຕ່ວ່າເປັນຫຍັງໄຂ່ມັນຈຶ່ງນ້ອຍແທ້ ທໍ່ກັບໜ່ວຍໝາກແຄ້ງນີ້ແຫຼະ, ມັນຫາກເປັນສີເຫຼືອງທັງເຫຼື້ອມໃສ ຕ່າງກັບໄຂ່ທັມດາ. ຜູ່ເປັນແມ່ໄດ້ຍິນແນວນັ້ນ ກໍຟ້າວລົງຂັ້ນໃດໄປຫາຄອກໄກ່ໂລດ, ພໍແຕ່ຫຼຽວເຫັນໄຂ່ປຫຼາດນ່ອຍນັ້ນ ລາວກໍຮ້ອງຂຶ້ນວ່າ : ໄກ່ຂອງເຮົາໄຂ່ອອກເປັນຄຳແລ້ວ ! ສອງແມ່ລູກກໍພາກັນດີອົກດີໃຈ ແລ້ວກໍຟ້າວເອົາເຂົ້າມາຫວ່ານໃຫ້ໄກ່ແມ່ໂຕນັ້ນກິນອີກເພື່ອຢາກໃຫ້ມັນໄຂ່ອອກມາຫຼາຍໜ່ວຍ.

ຄາວນຶ່ງ ຜູ່ເປັນຜົວກໍກັບມາຈາກການໄປຫາປາ, ເມັຽຂອງລາວກໍຮ້ອງບອກໂລດວ່າ : ພໍ່ອີ່ນາງ ! ໂຊກຂອງພວກເຮົາມາຮອດແລ້ວ ! ໄກ່ແມ່ເຮົາໄຂ່ອອກເປັນຄຳ. ເມັຽເວົ້າແບບປະຈົບປະແຈງກັບຜົວອີກວ່າ : ຂ້ອຍວ່າຈະປະໃຫ້ໄກ່ໄຂ່ມື້ລະໜ່ວຍມັນຄືຈະດົນແທ້, ບາງທີອາດຈະໄປໄຂ່ຢູ່ບ່ອນອື່ນເຮົາກໍບໍ່ໄດ້ຄຳຊ້ຳ ຫຼື ບໍ່ກໍຈະຖືກເຂົາລັກເອົາທັງໄກ່ນີ້ອີກ. ຜົວຖາມເມັຽວ່າ : ຄັນຊັ້ນເຮົາຈະເຮັດແນວໃດ ? ດ້ວຍຄວາມໂລບມາກໂລພາຜູ່ເປັນເມັຽກໍເວົ້າວ່າ : ພວກເຮົາມີແຕ່ຂ້າໄກ່ແມ່ນີ້ ແລ້ວຈັກເອົາຄຳຢູ່ໃນທ້ອງຂອງມັນ ໃຫ້ໝົດເທື່ອດຽວຈະດີກວ່າ ! ຜົວກໍບໍ່ຂືນໃຈເມັຽເລີຍ, ເວົ້າແລ້ວຜູ່ເປັນເມັຽກໍຈັດການຂ້າໄກ່ແມ່ໂຕນັ້ນທັນທີ, ແຕ່ວ່າໃນທ້ອ7ໄກ່ປາກົດວ່າບໍ່ເຫັນມີຄຳດັ່ງທີ່ເຂົາເຈົ້າຄິດໄວ້ເລີຍ, ຊ້ຳບໍ່ໝໍາໄຂ່ໄກ່ທີ່ເປັນຄຳກໍກັບເກີດເປັນກ້ອນຫີນທັມດາ, ສອງຜົວເມັຽກໍທຸກຍາກຄືເກົ່າ.

ນີ້ແຫຼະເພິ່ນວ່າ : ຢາກກິນຫຼາຍໄດ້ກິນທໍ່ກ້ອຍ ຢາກກິນໜ້ອຍໄດ້ກິນທໍ່ໂປມື ເປັນຄຳຕິເຕືອນໃຈໃຫ້ພວກເຮົາບໍ່ຄວນເປັນຄົນມີຈິດໃຈໂລບມາກໂລພາຄືແນວນັ້ນ